# ໑ ຊາເໜືອນ (ຊາມູເອນ)

ໃຈຄວາມສຳຄັນ ຊາເໝືອນ ກັບ ຊາອຶເລ (ໂຊໂລ)

ຂໍ້ຄວາມສຳຄັນ ບົດ ໑໕:໑໗

ຈຳນວນບົດ ມີ໑ ບົດ

ເຣື່ອງເກີດຂຶ້ນ ປີ ໑໑໔໐–໑໑໕໕ ກ່ອນ ຄ.ສ.

## ໑. ຄຳນຳ

ຄັ້ງແຮກໜັງສືຊາເໝືອນທີ່ນຶ່ງທີສອງ ໄດ້ຂຽນເປັນພາສາເຮັບເຣີ ແລະຢູ່ໃນເຫລັ້ມດຽວກັນຕໍ່ມາພວກນັກປາດ ກຽວ ຄົນໄດ້ແປອອກເປັນພາສາເຣເລນ (ກຣີກ) ພ້ອມທັງໄດ້ແຍກໜັງສືນີ້ອອກເປັນສອງເຫລັ້ມຄືເປັນຊາເໝືອນທີ ໑ ແລະທີ ໒

## ໒. ວ່າດ້ວຍຄາວສໄມຂອງທ່ານຊາເໜືອນ

ເມື່ອສິ້ນສໄມຂອງພວກຜູ້ປົກຄອງແລ້ວ ກໍແມ່ນຄາວສໄມຂອງທ່ານຊາເໝືອນຫລັງຈາກນັ້ນຕໍ່ມາ ກໍແມ່ນຄາວ ສໄມພວກ ກະສັດຂອງຊາດອິສຣາເອັນ. ໃນອາດີດຄາວທ່ານໂມເຊແລະທ່ານໂຢຊວຍເປັນຫົວໜ້າພວກອິສຣາເອັນນັ້ນ ອົງພຣະເຢໂຮວາກໍຈິງເປັນພຣະມະຫາກະສັດຂອງພວກເຂົາ ແລ້ວຕໍ່ມາໃນຄາວຂອງພວກຜູ້ປົກຄອງປະຊາຊົນກໍຂໍໃຫ້ຊາ-ເໝືອນແຕ່ງຕັ້ງກະສັດອົງນຶ່ງປົກຄອງພວກເຂົາ (ຊາເໝືອນທີ ໑ ບົດ ໑

ແລະ໙) ເຖິງແມ່ນວ່າເລື່ອງນີ້ຈະບໍ່ຊອບພຣະໄທພຣະເຈົ້າກໍດີ ພຣະອົງຍັງຊົງອານຸຍາດໃຫ້ຊາເໝືອນແຕ່ງຕັ້ງ ຊາອຶເລຂຶ້ນເປັນກະສັດ ກະສັດຊາອຶເລອົງນີ້ໄດ້ປົກຄອງປະເທດແບບສົມບູຣະນາຍາສິດທິຣາດ (ກະສັດມີອຳນາດສູງສຸດ)

## ໓. ວ່າດ້ວຍຄົນສຳຄັນ

໑. ເອລີ ຜູ້ ເປັນປະໂລຫິດ. ລາວເປັນຄົນບໍ່ສັດຊື່ຕໍ່ພຣະເຈົ້າ ລາວບໍ່ໄດ້ຕັດສິນລູກຊາຍທັງສອງທີ່ໄດ້ກະທຳການຊົ່ວເມື່ອຖວາຍບູຊາ (ບົດ ໒) ພຣະເຈົ້າຈຶ່ງຊົງລົງໂທດເຂົາຢ່າງໜັກໂດຍຊົງປະຖິ້ມຄອບຄົວຂອງເຂົາ ຄືບໍ່ໃຫ້ເຂົາໄດ້ປະຕິບັດພຣະເຈົ້າໃນວິຫານຕໍ່ໄປ (ບົດ ໔)

### ໒. ວ່າດ້ວຍເລື່ອງຂອງຊາເໝືອນ.

ກ. ຖືກ ຖວາຍ ໃຫ້ ແກ່ ພຣະ ເຈົ້າ ຕັ້ງ ແຕ່ຢູ່ ໃນ ທ້ອງ ແມ່ (ບົດ ໑)

ຂ. ເມື່ອຍັງນ້ອຍໄດ້ຍິນສຽງເອົ້າຂອງພຣະເຈົ້າ (ບົດ ໓)

ຄ. ໄດ້ແຕ່ງຕັ້ງຊາອຶເລເປັນກະສັດ (ບົດ ໑໐)

ງ. ເປັນຄົນເອົາໃຈໃສ່ໃນການອ້ອນວອນ (ບົດ ໑໒:໑໙ –໒໓)

ຈ. ໄດ້ຊໂລມທາຫົວດາວິດໃຫ້ເປັນກະສັດ (ບົດ ໑໖)

## ໓. ວ່າດ້ວຍຊາອຶເລຜູ້ເປັນກະສັດອົງແຣກຂອງພວກອິສຣາເອັນ

ກ. ພຣະເຈົ້າຊົງປະຖິ້ມຊາອິເລ ເພາະວ່າບໍ່ເຊື່ອຟັງຄຳສັ່ງຂອງພຣະອົງ ໑:໑໐–໒໓

ຂ. ຊາອຶເລໄດ້ອິດສາກະສັດດາວິດ ແລະຫາວິທີຈະຂ້າເສັຍ ບົດ ໑໘–໒໕

ຄ. ຊາອຶເລບໍ່ຊນະກະສັດດາວິດ ແລະໄດ້ຂ້າຕົວເອງ ບົດ ໓໑

## ໔. ວ່າດ້ວຍກະສັດດາວິດຜູ້ເຊື່ອຟັງພຣະເຈົ້າ

ກ. ເປັນປູ່ຍ່າຕານາຍຂອງພຣະເຢຊູ

ຂ. ໄດ້ຊນະໂຄລິອາດ ບົດ ໑໗

ຄ. ໄດ້ສແດງໄມຕຣີຈິດແລະນັບຖືຊາອຶເລ ບົດ ໒໕:໒໒–໒໓

ງ. ໄດ້ຂຽນບົດເພງຫລາຍບົດ

## ໕. ການແບ່ງເປັນພາກ

ພາກທີ ໑ ຊາເໝືອນເປັນຜູ້ປົກຄອງ ບົດ ໑–໗

,, ໒ ຊາອຶເລເປັນກະສັດອົງແຣກ ບົດ ໘–໑໕

,, ໓ ດາວິດຖືກເລືອກໃຫ້ເປັນກະສັດແຕ່ຊາອຶເລຊັດຂວາງໃສ່ ບົດ ໑໖–໓໑